# ສາລະບານ


ມະຕິຕົກລົງ ............ 3

ລັດຖະດຳລັດ ............ 4

ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ............ 5

ໝວດທີ I ບົດບັນຍັດທົ່ວໄປ ............ 5

ມາດຕາ 1( ໃໝ່ ). ຈຸດປະສົງຂອງກົດໝາຍ ວ່າດ້ວຍລັດຖະບານ ............ 5

ມາດຕາ 2( ໃໝ່ ). ທີ່ຕັ້ງ ແລະພາລະບົດບາດຂອງລັດຖະບານ ............ 5

ມາດຕາ 3( ໃໝ່ ). ຫລັກການເຄື່ອນໄຫວຂອງລັດຖະບານ ............ 5

ມາດຕາ 4( ໃໝ່ ). ອາຍຸການຂອງລັດຖະບານ ............ 6

ໝວດທີ II ໂຄງປະກອບການຈັດຕັ້ງ, ສິດ ແລະໜ້າທີ່ຂອງລັດຖະບານ ............ 6

ມາດຕາ 5( ໃໝ່ ). ໂຄງປະກອບກົງຈັກຂອງລັດຖະບານ ............ 6

ມາດຕາ 6( ໃໝ່ ). ໂຄງປະກອບຂອງລັດຖະບານ ............ 6

ມາດຕາ 7( ໃໝ່ ). ສິດ ແລະໜ້າທີ່ຂອງລັດຖະບານ ............ 6

ໝວດທີ III ກອງປະຊຸມລັດຖະບານ ............ 8

ມາດຕາ 8( ໃໝ່ ). ກອງປະຊຸມລັດຖະບານ ............ 8

ມາດຕາ 9( ໃໝ່ ). ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມລັດຖະບານ ............ 8

ມາດຕາ 10( ໃໝ່ ). ກອງປະຊຸມພິເສດຂອງລັດຖະບານ ............ 9

ໝວດທີ IV ພາລະບົດບາດ, ສິດ ແລະໜ້າທີ່ຂອງນາຍົກລັດຖະມົນຕີ ............ 9

ມາດຕາ 11( ໃໝ່ ). ພາລະບົດບາດຂອງນາຍົກລັດຖະມົນຕີ ............ 9

ມາດຕາ 12( ໃໝ່ ). ສິດ ແລະໜ້າທີ່ຂອງນາຍົກລັດຖະມົນຕີ ............ 9

ມາດຕາ 13( ໃໝ່ ). ການແຕ່ງຕັ້ງນາຍົກລັດຖະມົນຕີ ............ 10

ມາດຕາ 14( ໃໝ່ ). ພາລະບົດບາດຂອງຮອງນາຍົກລັດຖະມົນຕີ ............ 10

ມາດຕາ 15 ( ໃໝ່ ). ການແຕ່ງຕັ້ງຮອງນາຍົກລັດຖະມົນຕີ ............ 11

ໝວດທີ V ສຳນັກງານນາຍົກລັດຖະມົນຕີ ............ 11

ມາດຕາ 16 ( ໃໝ່ ). ພາລະບົດບາດຂອງສຳນັກງານນາຍົກລັດຖະມົນຕີ ............ 11

ມາດຕາ 17 ( ໃໝ່ ). ໂຄງປະກອບກົງຈັກຂອງສຳນັກງານນາຍົກລັດຖະມົນຕີ ............ 11

ມາດຕາ 18 ( ໃໝ່ ). ໂຄງປະກອບບຸກຄະລາກອນຂອງສຳນັກງານນາຍົກລັດຖະມົນຕີ ............ 11

ມາດຕາ 19 ( ໃໝ່ ). ສິດ ແລະໜ້າທີ່ຂອງສຳນັກງານນາຍົກລັດຖະມົນຕີ ............ 11

ມາດຕາ 20 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ............ 12

ມາດຕາ 21 ( ໃໝ່ ). ສິດ ແລະໜ້າທີ່ຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ............ 12

ມາດຕາ 22 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີຊ່ວຍປະຈຳສຳນັກງານນາຍົກລັດຖະມົນຕີ ............ 13

ໝວດທີ VI ກະຊວງ ແລະອົງການທຽບເທົ່າກະຊວງ ............ 13

ມາດຕາ 23(ໃໝ່ ). ທີ່ຕັ້ງ ແລະພາລະບົດບາດຂອງກະຊວງ ແລະອົງການທຽບເທົ່າກະຊວງ............13
ມາດຕາ 24 ( ໃໝ່ ). ໂຄງປະກອບກົງຈັກຂອງກະຊວງ ແລະອົງການທຽບເທົ່າກະຊວງ....................13
ມາດຕາ 25 ( ໃໝ່ ). ໂຄງປະກອບບຸກຄະລາກອນຂອງກະຊວງ ແລະອົງການທຽບເທົ່າກະຊວງ ........13
ມາດຕາ 26 ( ໃໝ່ ). ສິດ ແລະໜ້າທີ່ຂອງກະຊວງ ແລະອົງການທຽບເທົ່າກະຊວງ..........................14
ມາດຕາ 27 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີວ່າການກະຊວງ ແລະຫົວໜ້າອົງການທຽບເທົ່າກະຊວງ.................................................14
ມາດຕາ 28 ( ໃໝ່ ). ສິດ ແລະໜ້າທີ່ຂອງລັດຖະມົນຕີວ່າການກະຊວງ ແລະຫົວໜ້າອົງການທຽບເທົ່າກະຊວງ.................................................14
ມາດຕາ 29 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີຊ່ວຍວ່າການກະຊວງ ແລະຮອງຫົວໜ້າອົງການທຽບເທົ່າກະຊວງ...............................................15
ໝວດທີ VII ລະບອບວິທີເຮັດວຽກຂອງລັດຖະບານ ..............................................................16
ມາດຕາ 30 ( ໃໝ່ ). ວິທີເຮັດວຽກຂອງລັດຖະບານ ..............................................................16
ມາດຕາ 31. ການເຄື່ອນໄຫວວຽກງານຂອງສະມາຊິກລັດຖະບານ ...........................................16
ມາດຕາ 32 ( ໃໝ່ ). ການພົວພັນກັບສະພາແຫ່ງຊາດ...........................................................16
ມາດຕາ 33 ( ໃໝ່ ). ການພົວພັນກັບປະທານປະເທດ ..........................................................17
ມາດຕາ 34 ( ໃໝ່ ). ການພົວພັນກັບສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ ..............................................17
ມາດຕາ 35 ( ໃໝ່ ). ການພົວພັນກັບແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມ...................................................................17
ມາດຕາ 36 ( ໃໝ່ ). ການພິຈາລະນາແກ້ໄຂຄຳຮ້ອງທຸກ ຫລືຄຳສະເໜີຂອງປະຊາຊົນ ..................17
ໝວດທີ VIII ບົດບັນຍັດສຸດທ້າຍ.....................................................................................18
ມາດຕາ 37. ການຈັດຕັ້ງປະຕິບັດ .......................................................................................18
ມາດຕາ 38( ໃໝ່ ). ຜົນສັກສິດ ..........................................................................................18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ                                        ເລກທີ 27 /ສພຊ

ມະຕິຕົກລົງ

# ຂອງສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍລັດຖະບານ

## ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ

ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 2 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ພາຍຫລັງທີ່ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງກ່ຽວກັບເນື້ອໃນການປັບ ປຸງຂອງກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ V, ໃນວາລະປະຊຸມຕອນບ່າຍ ຂອງວັນທີ 6 ພຶດສະພາ 2003.

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1:</u> ຮັບຮອງເອົາກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ດ້ວຍຄະແນນສຽງເປັນເອກະສັນ.

<u>ມາດຕາ 2:</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 6 ພຶດສະພາ 2003

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 34 /ສປປ

ລັດຖະດຳລັດ

## ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍລັດຖະບານ
## ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 1 ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 27 /ສພຊ, ລົງວັນທີ 6 ພຶດສະພາ 2003 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ ຄປຈ, ລົງວັນທີ 9 ພຶດສະພາ 2003.

**ປະທານປະເທດ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດ:**

**ມາດຕາ 1:** ປະກາດໃຊ້ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ.

**ມາດຕາ 2:** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 30 ພຶດສະພາ 2003

ປະທານປະເທດແຫ່ງ ສປປລາວ

ຄຳໄຕ ສີພັນດອນ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ສະພາແຫ່ງຊາດ | ເລກທີ 02 / ສພຊ

ວຽງຈັນ, ວັນທີ 6 ພຶດສະພາ 2003

# ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

## ໝວດທີ I ບົດບັນຍັດທົ່ວໄປ

### ມາດຕາ 1( ໃໝ່ ). ຈຸດປະສົງຂອງກົດໝາຍ ວ່າດ້ວຍລັດຖະບານ

ກົດໝາຍ ວ່າດ້ວຍລັດຖະບານກໍານົດຫລັກການການຈັດຕັ້ງ, ການເຄື່ອນໄຫວ ແລະລະບອບແບບແຜນວິທີເຮັດວຽກຂອງລັດຖະບານ ເພື່ອເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມ ຄອງເສດຖະກິດ-ສັງ ຄົມ, ການນໍາໃຊ້ຊັບພະຍາກອນແຫ່ງຊາດ ແລະການປົກປັກຮັກສາສິ່ງແວດລ້ອມ ມີປະສິດທິພາບ, ຮັບປະກັນການປະຕິບັດລະບຽບກົດໝາຍ, ເຮັດໃຫ້ປະເທດຊາດຮັ່ງມີເຂັ້ມແຂງ, ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະຍຸຕິທໍາ.

### ມາດຕາ 2( ໃໝ່ ). ທີ່ຕັ້ງ ແລະພາລະບົດບາດຂອງລັດຖະບານ

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນອົງການ ບໍລິຫານແຫ່ງລັດ ຊຶ່ງຮັບຮອງເອົາໂດຍສະພາແຫ່ງຊາດ, ຮັບຜິດຊອບຕໍ່ສະພາແຫ່ງຊາດ ແລະປະທານປະເທດ, ມີພາລະບົດບາດຄຸ້ມຄອງຢ່າງເປັນເອກະພາບ ການປະຕິບັດໜ້າທີ່ ຂອງລັດໃນທຸກດ້ານ: ດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ການນໍາໃຊ້ຊັບພະຍາກອນແຫ່ງຊາດ, ການ ປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະການຕ່າງປະເທດ.

### ມາດຕາ 3( ໃໝ່ ). ຫລັກການເຄື່ອນໄຫວຂອງລັດຖະບານ

ລັດຖະບານເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ ຕາມຫລັກການລວມສູນ ປະຊາທິປະໄຕ ບົນພື້ນຖານລັດຖະທໍາມະນູນ ແລະກົດໝາຍ ໂດຍມີພັກປະຊາຊົນປະ ຕິວັດລາວເປັນແກນນໍາ ແລະຖືເອົາອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະ ຫາຊົນ ແລະອົງການຈັດຕັ້ງສັງຄົມເປັນກໍາລັງແຮງ, ນໍາໃຊ້ວິທີການສຶກສາອົບຮົມ, ເສດຖະກິດ ແລະບໍລິຫານ ເພື່ອຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ.

**ມາດຕາ 4( ໃໝ່ ). ອາຍຸການຂອງລັດຖະບານ**

ລັດຖະບານມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ. ໃນກໍລະນີທີ່ລັດ ຖະບານໝົດອາຍຸການແລ້ວ ແຕ່ສະພາແຫ່ງຊາດຫາກຍັງບໍ່ທັນໄດ້ຮັບຮອງເອົາລັດຖະບານ ຊຸດໃໝ່ນັ້ນ ໃຫ້ລັດຖະບານຊຸດເກົ່າ ສືບຕໍ່ດໍາເນີນໜ້າທີ່ຂອງຕົນຕໍ່ໄປ.

## ໝວດທີ II ໂຄງປະກອບການຈັດຕັ້ງ, ສິດ ແລະໜ້າທີ່ຂອງລັດຖະບານ

**ມາດຕາ 5( ໃໝ່ ). ໂຄງປະກອບກົງຈັກຂອງລັດຖະບານ**

ກົງຈັກຂອງລັດຖະບານ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ປະ ກອບດ້ວຍສໍານັກງານນາຍົກລັດຖະມົນຕີ, ກະຊວງ ແລະອົງການທຽບເທົ່າກະຊວງ ຊຶ່ງຖືກຮັບຮອງເອົາໂດຍສະພາແຫ່ງຊາດ ຕາມການສະເໜີຂອງນາຍົກລັດຖະມົນຕີ.

ການກໍານົດໂຄງປະກອບກົງຈັກຂອງລັດຖະບານ ແມ່ນອີງໃສ່ຄວາມຮຽກຮ້ອງຕ້ອງການ ຕົວຈິງຂອງປະເທດໃນແຕ່ລະໄລຍະ.

**ມາດຕາ 6( ໃໝ່ ). ໂຄງປະກອບຂອງລັດຖະບານ**

ລັດຖະບານປະກອບດ້ວຍນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະ ມົນຕີວ່າການກະຊວງ, ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ ແລະຫົວໜ້າອົງການທຽບເທົ່າກະຊວງ.

**ມາດຕາ 7( ໃໝ່ ). ສິດ ແລະໜ້າທີ່ຂອງລັດຖະບານ**

ລັດຖະບານ ມີສິດ ແລະໜ້າທີ່ດັ່ງນີ້ :

1. ປະຕິບັດລັດຖະທໍາມະນູນ, ກົດໝາຍ, ມະຕິຕົກລົງຂອງສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດໍາລັດຂອງປະທານປະເທດ, ຈັດຕັ້ງໂຄສະນາເຜີຍແຜ່ກົດໝາຍ, ສຶກສາອົບຮົມສະຕິເຄົາລົບ ແລະປະຕິບັດລະບຽບກົດໝາຍ; ກໍານົດບັນດາມາດຕະການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທໍາຂອງປະຊາຊົນ;
2. ກໍານົດແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບ ປະມານແຫ່ງລັດປະຈໍາປີ ແລ້ວນໍາສະເໜີສະພາແຫ່ງຊາດພິຈາລະນາ ແລະ ຮັບຮອງເອົາ;
3. ຄຸ້ມຄອງຢ່າງເປັນເອກະພາບການກໍ່ສ້າງ, ການຂະຫຍາຍພື້ນຖານເສດຖະກິດ, ວັດທະນະທໍາ-ສັງຄົມ, ວິທະຍາສາດ, ເຕັກນິກ, ການປະຕິບັດນະໂຍບາຍການເງິນ, ເງິນຕາ, ຮັບປະກັນການນໍາໃຊ້ຊັບສົມບັດຂອງຊາດຢ່າງມີປະສິດທິພາບ,
ປົກປ້ອງຊັບສົມບັດຂອງລັດ, ລວມໝູ່ ແລະບຸກຄົນບົນພື້ນຖານລັດຖະທໍາມະນູນ ແລະກົດໝາຍ;

4. ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ສະພາແຫ່ງຊາດ, ຕໍ່ຄະນະປະຈໍາ ສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ ແລະລາຍງານຕໍ່ປະທານປະເທດ;
5. ຄົ້ນຄວ້າ ແລະສະເໜີຮ່າງກົດໝາຍຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ, ສະເໜີຮ່າງລັດຖະບັນຍັດຕໍ່ຄະນະປະຈໍາສະພາແຫ່ງຊາດ ເພື່ອພິຈາລະ ນາ;
6. ຄົ້ນຄວ້າ ແລະສະເໜີຮ່າງລັດຖະດໍາລັດຕໍ່ປະທານປະເທດ ເພື່ອພິຈາລະນາ ຕົກລົງ;
7. ອອກດໍາລັດ, ມະຕິຕົກລົງກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຢີ, ການສ້າງ ແລະນໍາໃຊ້ຊັບພະຍາກອນມະນຸດ, ການປົກປັກຮັກສາ ແລະນໍາໃຊ້ຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມ ແລະຊັບພະຍາກອນ ອື່ນໆ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະການເຄື່ອນໄຫວວຽກງານການຕ່າງປະເທດ;
8. ຈັດຕັ້ງ, ຊີ້ນໍາ, ອໍານວຍຄວບຄຸມ ແລະກວດກາການເຄື່ອນໄຫວຂອງບັນດາ ຂະແໜງການ ແລະອົງການປົກຄອງທ້ອງຖິ່ນ ເພື່ອຮັບປະກັນໃຫ້ມີປະສິດທິ ພາບ ແລະຖືກຕ້ອງ ຕາມລະບຽບກົດໝາຍ;
9. ຈັດຕັ້ງ, ຄຸ້ມຄອງພົນລະເມືອງຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
10. ເພີ່ມທະວີການປັບປຸງ ແລະກວດກາວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບທົ່ວປວງຊົນ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ກໍ່ສ້າງກໍາລັງປະກອບອາວຸດປະຊາຊົນ, ປະຕິບັດຄໍາສັ່ງລະດົມພົນ, ກໍານົດມາດຕະ ການຕ່າງໆທີ່ຈໍາເປັນ ເພື່ອປົກປັກຮັກສາປະເທດຊາດ;
11. ງົດການປະຕິບັດ, ລົບລ້າງ ຫລືຍົກເລີກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການຂອງກະຊວງ, ອົງການທຽບເທົ່າກະຊວງ, ອົງການອື່ນໆທີ່ຂຶ້ນກັບລັດຖະບານ ແລະອົງການປົກຄອງທ້ອງຖິ່ນທີ່ຂັດກັບລະບຽບກົດໝາຍ;
12. ຕົກລົງສ້າງຕັ້ງ, ຍຸບເລີກ ແລະກໍານົດເຂດແດນຂອງເມືອງ ແລະເທດສະບານ ຕາມການສະເໜີຂອງເຈົ້າແຂວງ ຫລືເຈົ້າຄອງນະຄອນ;
13. ຈັດຕັ້ງດໍາເນີນການກວດກາ, ກວດການຂອງລັດ, ຕ້ານການລະເມີດລະບຽບ ກົດໝາຍ, ການສໍ້ລາດບັງຫລວງ ແລະປະກົດການຫຍໍ້ທໍ້ອື່ນໆ; ພິຈາລະນາ ແກ້ໄຂຄໍາຮ້ອງທຸກ ຫລືຄໍາສະເໜີຂອງປະຊາຊົນ ກ່ຽວກັບການກະທໍາທີ່ບໍ່ຖືກຕ້ອງຂອງພະນັກງານ, ລັດຖະກອນ ແລະອົງການບໍລິຫານລັດຂັ້ນຕ່າງໆ ບົນພື້ນຖານລະບຽບກົດໝາຍ;
14. ພົວພັນ, ຮ່ວມມື, ເຈລະຈາ, ເຊັນສົນທິສັນຍາ ແລະສັນຍາກັບຕ່າງປະເທດ, ຄຸ້ມຄອງ ແລະກວດກາການເຄື່ອນໄຫວວຽກງານການຕ່າງປະເທດ, ການປະຕິບັດສົນທິສັນຍາ ແລະສັນຍາທີ່ໄດ້ເຊັນກັນແລ້ວ;
15. ປະຕິບັດສິດ ແລະໜ້າທີ່ອື່ນໆທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະລະບຽບ ກົດໝາຍ.

## ໝວດທີ III ກອງປະຊຸມລັດຖະບານ

**ມາດຕາ 8( ໃໝ່ ). ກອງປະຊຸມລັດຖະບານ**

ກອງປະຊຸມລັດຖະບານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນນາຍົກລັດຖະມົນຕີເປັນຜູ້ຮຽກໂຮມ ແລະເປັນປະທານ ຍົກເວັ້ນໃນກໍລະນີທີ່ປະທານປະເທດເຂົ້າຮ່ວມຕາມທີ່ໄດ້ກໍາ ນົດໄວ້ໃນມາດຕາ 10 (ໃຫມ່)ຂອງກົດໝາຍສະບັບນີ້. ກອງປະຊຸມລັດຖະບານຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີສະມາຊິກລັດຖະບານ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈໍານວນສະ ມາຊິກທັງໝົດ.

ສະມາຊິກລັດຖະບານມີພັນທະ ແລະ ໜ້າທີ່ເຂົ້າຮ່ວມກອງປະຊຸມລັດຖະບານທຸກ ຄັ້ງ. ນອກ ຈາກນັ້ນ ອາດເຊີນຜູ້ອື່ນທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມລັດຖະບານກໍໄດ້. ສໍາ ລັບຜູ້ທີ່ບໍ່ແມ່ນສະມາຊິກ ລັດຖະບານນັ້ນ ມີສິດປະກອບຄວາມຄິດຄວາມເຫັນຕໍ່ກອງປະຊຸມ ແຕ່ບໍ່ມີສິດລົງຄະແນນສຽງ. ກອງປະ ຊຸມລັດຖະບານພິຈາລະນາຕົກລົງບັນຫາ ຫລືລົງມະຕິ ໂດຍຖືເອົາຕາມສຽງສ່ວນຫລາຍ. ຖ້າຫາກມີສຽງ ເທົ່າກັນນັ້ນ ສຽງຂອງປະທານກອງ ປະຊຸມເປັນອັນຕັດສິນ.

ໃນກໍລະນີທີ່ມີຄວາມຈໍາເປັນ ແລະຮີບດ່ວນອາດຈະເປີດກອງປະຊຸມສະໄໝວິສາມັນ ກໍໄດ້ ຕາມ ການຕົກລົງຂອງນາຍົກລັດຖະມົນຕີ ຫລືຕາມການສະເໜີຂອງສະມາຊິກລັດຖະ ບານຢ່າງໜ້ອຍໜຶ່ງ ສ່ວນສາມຂອງຈໍານວນສະມາຊິກທັງໝົດ.

ໃນກອງປະຊຸມລັດຖະບານທີ່ກ່າວມາຂ້າງເທິງນັ້ນ ລັດຖະບານຍັງຮຽກໂຮມເຈົ້າແຂວງ ແລະເຈົ້າຄອງນະຄອນເຂົ້າຮ່ວມປະຊຸມນໍາປີລະສອງເທື່ອ ເພື່ອກວດກາ ແລະຊີ້ນໍາການປະຕິບັດໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ.

ກອງປະຊຸມແຕ່ລະຄັ້ງຕ້ອງເຮັດບົດບັນທຶກ ຊຶ່ງເຊັນຢັ້ງຢືນໂດຍປະທານກອງປະ ຊຸມ ແລ້ວສົ່ງ ໃຫ້ສະມາຊິກລັດຖະບານ ແລະພາກສ່ວນທີ່ກ່ຽວຂ້ອງຊາບ ແລະຈັດຕັ້ງປະ ຕິບັດ.

**ມາດຕາ 9( ໃໝ່ ). ບັນຫາທີ່ຕ້ອງນໍາເຂົ້າກອງປະຊຸມລັດຖະບານ**

ບັນຫາທີ່ຕ້ອງນໍາເຂົ້າພິຈາລະນາ ແລະຕົກລົງໃນກອງປະຊຸມລັດຖະບານມີດັ່ງນີ້ :

1. ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ;
2. ແຜນງົບປະມານແຫ່ງລັດ ແລະການດັດແກ້ແຜນງົບປະມານແຫ່ງລັດປະຈໍາປີ;
3. ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດໍາລັດ ແລະຮ່າງດໍາລັດ;
4. ການສ້າງຕັ້ງ, ການຍຸບເລີກ, ການໂຮມ, ການແຍກກະຊວງ, ອົງການທຽບ ເທົ່າກະຊວງ, ແຂວງ, ນະຄອນ ແລະເຂດພິເສດ, ການກໍານົດເຂດແດນ ແຂວງ, ນະຄອນ ແລະເຂດພິ ເສດ ກ່ອນນໍາສະເໜີສະພາແຫ່ງຊາດພິຈາລະ ນາ ແລະຮັບຮອງ;
5. ການສ້າງຕັ້ງ, ການຍຸບເລີກ, ການໂຮມ, ການແຍກ ບັນດາອົງການຈັດຕັ້ງທີ່ຂຶ້ນໂດຍກົງ ກັບລັດຖະບານ;

6. ການສ້າງຕັ້ງ, ການຍຸບເລີກ, ການໂຮມ, ການແຍກ ຫລືການກຳນົດເຂດແດນຂອງເມືອງ ແລະເທດສະບານ;
7. ບົດສະຫລຸບການເຄື່ອນໄຫວວຽກງານຂອງລັດຖະບານ;
8. ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະການພົວພັນຕ່າງປະເທດ;
9. ເນື້ອໃນການເຈລະຈາ, ສົນທິສັນຍາ ແລະສັນຍາກັບຕ່າງປະເທດ;
10. ບົດລາຍງານຕໍ່ສະພາແຫ່ງຊາດ ແລະຕໍ່ປະທານປະເທດ.

ນອກຈາກບັນຫາທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ກອງປະຊຸມລັດຖະບານຈະນຳເອົາ ບັນ ຫາອື່ນທີ່ສຳຄັນ ແລະຈຳເປັນມາພິຈາລະນາກໍໄດ້.

**ມາດຕາ 10( ໃໝ່ ). ກອງປະຊຸມພິເສດຂອງລັດຖະບານ**

ກອງປະຊຸມພິເສດຂອງລັດຖະບານ ແມ່ນກອງປະຊຸມສະມາຊິກລັດຖະບານ ໂດຍການຮຽກໂຮມ ແລະເປັນປະທານຂອງປະທານປະເທດ ຊຶ່ງສາມາດເປີດຂຶ້ນໄດ້ທຸກເວລາ ເມື່ອປະເທດຊາດຕົກຢູ່ໃນສະພາວະວິກິດການຮ້າຍແຮງທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ໄພທຳມະຊາດ ຫລືໃນສະພາວະສຸກເສີນທາງດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະການພົວພັນກັບຕ່າງປະເທດ.

## ໝວດທີ IV ພາລະບົດບາດ, ສິດ ແລະໜ້າທີ່ຂອງນາຍົກລັດຖະມົນຕີ

**ມາດຕາ 11( ໃໝ່ ). ພາລະບົດບາດຂອງນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ ເປັນຫົວໜ້າລັດຖະບານ, ຊີ້ນຳ ແລະອຳນວຍຄວບຄຸມການ ເຄື່ອນໄຫວວຽກງານຂອງລັດຖະບານ ແລະອົງການປົກຄອງທ້ອງຖິ່ນ.

**ມາດຕາ 12( ໃໝ່ ). ສິດ ແລະໜ້າທີ່ຂອງນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ ມີສິດ ແລະໜ້າທີ່ດັ່ງນີ້ :

1. ຮຽກໂຮມ ແລະເປັນປະທານກອງປະຊຸມລັດຖະບານ;
2. ຊີ້ນຳ ແລະອຳນວຍຄວບຄຸມວຽກງານຂອງລັດຖະບານ, ກວດກາການປະຕິບັດມະຕິ ຂອງສະພາແຫ່ງຊາດ, ມະຕິຂອງກອງປະຊຸມລັດຖະບານ ແລະການເຄື່ອນໄຫວວຽກງານຂອງກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະ ຄອນ ແລະອົງການອື່ນໆ ທີ່ຂຶ້ນກັບລັດຖະ ບານ;
3. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງ, ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ;

4. ສະເໜີປະທານປະເທດ ແຕ່ງຕັ້ງຜູ້ຕາງໜ້າທີ່ມີອຳນາດເຕັມ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳ ຢູ່ຕ່າງປະເທດ ຫລືຮຽກຄືນ;
5. ສະເໜີປະທານປະເທດແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງເຈົ້າແຂວງ, ເຈົ້າ ຄອງນະຄອນ ແລະສະເໜີເລື່ອນຊັ້ນ ຫລືປົດຊັ້ນນາຍພົນຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ;
6. ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງລັດຖະມົນຕີຊ່ວຍວ່າການກະຊວງ, ລັດຖະ ມົນຕີຊ່ວຍປະຈຳສຳນັກງານນາຍົກລັດຖະມົນຕີ, ຮອງຫົວໜ້າອົງການທຽບເທົ່າກະຊວງ, ຫົວໜ້າ ແລະ ຮອງຫົວໜ້າທະບວງ, ຫົວໜ້າກົມ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ, ຫົວໜ້າອົງການທີ່ຂຶ້ນກັບລັດຖະບານ ແລະຕຳແໜ່ງທຽບເທົ່າອື່ນໆ;
7. ເລື່ອນຊັ້ນ ຫລືປົດຊັ້ນພັນເອກຢູ່ໃນກຳລັງປ້ອງກັນຊາດ, ປ້ອງກັນຄວາມສະ ຫງົບ;
8. ອອກດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບກົດໝາຍ ແລະແຜນການຂອງລັດຖະບານ; ອອກດຳລັດ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ແລະອົງການປົກຄອງທ້ອງຖິ່ນ;
9. ລາຍງານປະຈຳປີ ກ່ຽວກັບການປະຕິບັດໜ້າທີ່ຂອງລັດຖະບານຕໍ່ສະພາແຫ່ງ ຊາດ, ຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ ແລະລາຍງານຕໍ່ປະທານປະເທດ;
10. ມອບສິດ ແລະໜ້າທີ່ໃຫ້ຮອງນາຍົກລັດຖະມົນຕີທ່ານໃດທ່ານໜຶ່ງວ່າການແທນ ໃນເວລາຕິດຂັດ;
11. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນເຫດ ຜົນທາງ ດ້ານສຸຂະພາບ ຫລືດ້ວຍເຫດຜົນອື່ນໆ;
12. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ.

### ມາດຕາ 13( ໃໝ່ ). ການແຕ່ງຕັ້ງນາຍົກລັດຖະມົນຕີ

ນາຍົກລັດຖະມົນຕີ ຖືກແຕ່ງຕັ້ງ ຫລືປົດຕຳແໜ່ງ ໂດຍປະທານປະເທດ ພາຍຫລັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.

### ມາດຕາ 14( ໃໝ່ ). ພາລະບົດບາດຂອງຮອງນາຍົກລັດຖະມົນຕີ

ຮອງນາຍົກລັດຖະມົນຕີ ມີພາລະບົດບາດເປັນຜູ້ຊ່ວຍວຽກນາຍົກລັດຖະມົນຕີໃນການນຳພາ, ອຳນວຍຄວບຄຸມວຽກງານລວມຂອງລັດຖະບານ, ຮັບຜິດຊອບວຽກງານໃດ ໜຶ່ງ ຕາມການມອບໝາຍຂອງນາຍົກລັດຖະມົນຕີ. ເມື່ອນາຍົກລັດຖະມົນຕີຕິດຂັດແມ່ນຮອງນາຍົກລັດຖະມົນຕີຜູ້ທີ່ໄດ້ຮັບມອບໝາຍເປັນຜູ້ວ່າການແທນ.

ຮອງນາຍົກລັດຖະມົນຕີ ມີສິດລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດ ປະຕິບັດໜ້າທີ່ໄດ້ຍ້ອນເຫດຜົນທາງດ້ານສຸຂະພາບ ຫລືດ້ວຍເຫດຜົນອື່ນໆ.

**ມາດຕາ 15 ( ໃໝ່ ). ການແຕ່ງຕັ້ງຮອງນາຍົກລັດຖະມົນຕີ**

**ຮອງນາຍົກລັດຖະມົນຕີຖືກແຕ່ງຕັ້ງ ຫລືປົດຕຳແໜ່ງໂດຍປະທານປະເທດ ພາຍຫລັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.**

## ໝວດທີ V ສຳນັກງານນາຍົກລັດຖະມົນຕີ

**ມາດຕາ 16 ( ໃໝ່ ). ພາລະບົດບາດຂອງສຳນັກງານນາຍົກລັດຖະມົນຕີ**

ສຳນັກງານນາຍົກລັດຖະມົນຕີ ແມ່ນອົງການຈັດຕັ້ງໃນໂຄງປະກອບກົງຈັກຂອງລັດ ຖະບານ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ, ເປັນຜູ້ປະສານງານ ແລະຄົ້ນ ຄວ້າສະຫລຸບສັງລວມບັນຫາຕ່າງໆ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງລັດຖະບານ; ຄົ້ນຄວ້າ ແລະສ້າງເງື່ອນໄຂອຳນວຍຄວາມສະດວກ ໃນການປະຕິບັດວຽກງານຂອງລັດຖະ ບານ, ນາຍົກລັດຖະມົນຕີ ແລະອົງການອື່ນໆທີ່ຂຶ້ນກັບລັດຖະບານ.

**ມາດຕາ 17 ( ໃໝ່ ). ໂຄງປະກອບກົງຈັກຂອງສຳນັກງານນາຍົກລັດຖະມົນຕີ**

ສຳນັກງານນາຍົກລັດຖະມົນຕີ ປະກອບດ້ວຍຫ້ອງວ່າການສຳນັກງານນາຍົກລັດ ຖະມົນຕີ, ຄະນະເລຂາທິການລັດຖະບານ, ທະບວງ ແລະອົງການທີ່ຂຶ້ນກັບລັດຖະບານ.

**ມາດຕາ 18 ( ໃໝ່ ). ໂຄງປະກອບບຸກຄະລາກອນຂອງສຳນັກງານນາຍົກລັດຖະມົນຕີ**

ສຳນັກງານນາຍົກລັດຖະມົນຕີ ຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບໂດຍກົງຂອງນາຍົກລັດຖະມົນຕີ ມີຮອງນາຍົກລັດຖະມົນຕີ, ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນ ຕີ, ລັດຖະມົນຕີຊ່ວຍປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ແລະຮອງຫົວໜ້າ ຫ້ອງວ່າການ, ຫົວໜ້າ ແລະຮອງຫົວໜ້າຄະນະເລຂາທິການລັດຖະບານ, ຫົວໜ້າ ແລະ ຮອງຫົວໜ້າທະບວງ, ຫົວຫນ້າ ແລະຮອງຫົວຫນ້າອົງການທີ່ຂຶ້ນກັບລັດຖະບານ, ຫົວຫນ້າ ແລະຮອງຫົວໜ້າກົມ, ຫົວໜ້າ ແລະຮອງຫົວໜ້າ ພະແນກ ແລະພະນັກງານວິຊາການ.

**ມາດຕາ 19 ( ໃໝ່ ). ສິດ ແລະໜ້າທີ່ຂອງສຳນັກງານນາຍົກລັດຖະມົນຕີ**

ສຳນັກງານນາຍົກລັດຖະມົນຕີມີສິດ ແລະໜ້າທີ່ ດັ່ງນີ້ :

1. ກະກຽມ, ບັນທຶກ ແລະແຈ້ງຜົນຂອງກອງປະຊຸມລັດຖະບານ;
2. ສະຫລຸບສັງລວມ, ເກັບກຳຂໍ້ມູນຂ່າວສານທັງພາຍໃນ ແລະຕ່າງປະເທດ ເພື່ອລາຍງານໃຫ້ແກ່ລັດຖະບານ ແລະນາຍົກລັດຖະມົນຕີ;

3. ຄົ້ນຄວ້າ ວິໄຈ ບັນຫາຕ່າງໆ ແລະສະເໜີຕໍ່ລັດຖະບານ, ນາຍົກລັດຖະມົນຕີ ເພື່ອກໍານົດ ນະໂຍບາຍ, ແຜນຍຸດທະສາດການພັດທະນາ ແລະກົນໄກການຄຸ້ມຄອງເສດຖະກິດ, ວັດທະນະທໍາ-ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການ ປົກປັກຮັກສາຊັບພະຍາກອນແຫ່ງຊາດ ແລະຄວາມສົມດູນ ຂອງສິ່ງແວດລ້ອມ;
4. ຄຸ້ມຄອງຂົງເຂດວຽກງານຕ່າງໆທີ່ບໍ່ຂຶ້ນກັບກະຊວງ ແລະອົງການທຽບເທົ່າກະ ຊວງ;
5. ສ້າງເງື່ອນໄຂ ແລະອໍານວຍຄວາມສະດວກໃນການເຄື່ອນໄຫວວຽກງານ ໃຫ້ແກ່ລັດຖະບານ, ນາຍົກລັດຖະມົນຕີ ແລະບັນດາອົງການທີ່ສັງກັດສໍານັກງານນາ ຍົກລັດຖະມົນຕີ;
6. ພົວພັນ, ປະສານງານກັບຫ້ອງວ່າການສູນກາງພັກ, ຫ້ອງວ່າການສະພາແຫ່ງຊາດ, ຫ້ອງວ່າ ການສໍານັກງານປະທານປະເທດ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະ ຫາຊົນຂັ້ນສູນກາງ, ເພື່ອຄວາມເປັນ ເອກະພາບໃນການອໍານວຍ, ຄວບຄຸມວຽກງານລວມຂອງລັດຖະບານ;
7. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງນາຍົກລັດຖະມົນຕີ ແລະ ຕາມທີ່ ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະລະບຽບກົດໝາຍ.

**ມາດຕາ 20 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ**

ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ ແມ່ນສະມາຊິກລັດຖະບານ, ເປັນເສນາທິ ການໃຫ້ແກ່ລັດຖະບານ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງນາຍົກລັດຖະມົນຕີ.

**ມາດຕາ 21 ( ໃໝ່ ). ສິດ ແລະໜ້າທີ່ຂອງລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ**

ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີມີ ສິດ ແລະໜ້າທີ່ດັ່ງນີ້ :

1. ນໍາເອົາມະຕິຂອງກອງປະຊຸມລັດຖະບານ ໄປຜັນຂະຫຍາຍ ແລະຈັດຕັ້ງປະຕິ ບັດໃນຂົງ ເຂດວຽກງານທີ່ຕົນຮັບຜິດຊອບ;
2. ຊີ້ນໍາ, ຄຸ້ມຄອງ ແລະກວດກາການຈັດຕັ້ງປະຕິບັດແຜນການໃນຂົງເຂດວຽກງານທີ່ຕົນຮັບ ຜິດຊອບ;
3. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະແຈ້ງການ ແນໃສ່ເພີ່ມທະວີປະສິດ ທິພາບໃນຂົງ ເຂດວຽກງານທີ່ຕົນຮັບຜິດຊອບ;
4. ງົດການປະຕິບັດ, ລົບລ້າງ ຫລືຍົກເລີກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ຂອງອົງການຈັດຕັ້ງຂັ້ນລຸ່ມ ທີ່ຂຶ້ນກັບຂົງເຂດວຽກງານທີ່ຕົນຮັບຜິດຊອບ ແລະມີສິດສະເໜີ ດັດແປງ ຫລືຍົກເລີກນິຕິກໍາຂອງຂະແໜງການອື່ນ ຫລືຂອງແຂວງ, ນະຄອນ ທີ່ຂັດກັບ ລະບຽບຫລັກການຂອງຂົງເຂດວຽກງານທີ່ຕົນຮັບຜິດຊອບ ຫລືຂັດກັບລະບຽບກົດໝາຍ;
5. ວາງມາດຕະການອັນຈໍາເປັນ ເພື່ອປະຕິບັດແຜນການປະຈໍາປີ;
6. ສະເໜີຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດໍາລັດ ແລະຮ່າງດໍາລັດ ກ່ຽວກັບ ຂະແໜງການຂອງຕົນຕໍ່ລັດຖະບານ;

7. ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕໍາແໜ່ງຮອງຫົວໜ້າກົມ; ຫົວໜ້າ ແລະຮອງຫົວ ໜ້າພະແນກ ຂອງກົມ;
8. ພົວພັນ ຮ່ວມມື, ເຊັນສັນຍາ ແລະອະນຸສັນຍາກັບຕ່າງປະເທດ ຕາມການ ມອບໝາຍ ຂອງ ລັດຖະບານ;
9. ລາອອກຈາກຕໍາແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດ ຜົນທາງ ດ້ານສຸຂະພາບ ຫລື ດ້ວຍເຫດຜົນອື່ນໆ;
10. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງນາຍົກລັດຖະມົນຕີ ຫລືຕາມທີ່ ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະລະບຽບກົດໝາຍ.

**ມາດຕາ 22 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີຊ່ວຍປະຈໍາສໍານັກງານນາຍົກລັດຖະມົນຕີ**

ລັດຖະມົນຕີຊ່ວຍປະຈໍາສໍານັກງານນາຍົກລັດຖະມົນຕີ ມີພາລະບົດບາດເປັນເສ ນາທິການໃຫ້ແກ່ລັດຖະບານ ແລະຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງນາຍົກລັດຖະມົນຕີ ຫລືລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ.

ອາຍຸການຂອງລັດຖະມົນຕີຊ່ວຍ ປະຈໍາສໍານັກງານນາຍົກລັດຖະມົນຕີເທົ່າກັບອາ ຍຸການຂອງລັດຖະບານ.

ລັດຖະມົນຕີຊ່ວຍປະຈໍາສໍານັກງານນາຍົກລັດຖະມົນຕີ ມີສິດລາອອກຈາກຕໍາແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫລືດ້ວຍເຫດ ຜົນອື່ນໆ.

## ໝວດທີ VI ກະຊວງ ແລະອົງການທຽບເທົ່າກະຊວງ

**ມາດຕາ 23(ໃໝ່ ). ທີ່ຕັ້ງ ແລະພາລະບົດບາດຂອງກະຊວງ ແລະອົງການທຽບເທົ່າກະຊວງ**

ກະຊວງ ແລະອົງການທຽບເທົ່າກະຊວງ ແມ່ນກົງຈັກຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະຄຸ້ມຄອງມະຫາພາກກ່ຽວກັບຂະແໜງການ ຂອງຕົນໃນຂອບເຂດທົ່ວປະເທດ.

**ມາດຕາ 24 ( ໃໝ່ ). ໂຄງປະກອບກົງຈັກຂອງກະຊວງ ແລະອົງການທຽບເທົ່າກະຊວງ**

ກະຊວງ ແລະອົງການທຽບເທົ່າກະຊວງ ປະກອບດ້ວຍຫ້ອງການກະຊວງ, ຫ້ອງ ການອົງການທຽບເທົ່າກະຊວງ, ກົມ, ພະແນກ, ສະຖາບັນ ແລະຫົວໜ່ວຍວິຊາການຕ່າງໆ ຊຶ່ງກໍານົດໂດຍດໍາລັດຂອງນາຍົກລັດຖະມົນຕີ.

**ມາດຕາ 25 ( ໃໝ່ ). ໂຄງປະກອບບຸກຄະລາກອນຂອງກະຊວງ ແລະອົງການທຽບເທົ່າກະຊວງ**

ກະຊວງ ແລະອົງການທຽບເທົ່າກະຊວງ ປະກອບມີລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ລັດຖະມົນຕີຊ່ວຍວ່າການກະຊວງ, ຮອງຫົວໜ້າອົງການ ທຽບເທົ່າກະຊວງ; ຫົວໜ້າ, ຮອງຫົວໜ້າຫ້ອງການ; ຫົວໜ້າ, ຮອງຫົວໜ້າກົມ; ຫົວໜ້າ, ຮອງຫົວໜ້າພະແນກ; ຫົວໜ້າ, ຮອງຫົວໜ້າສະຖາບັນ; ຫົວໜ້າ ແລະຮອງຫົວໜ້າຂອງຫົວ ໜ່ວຍວິຊາການ ແລະພະນັກງານວິຊາການ.

**ມາດຕາ 26 ( ໃໝ່ ). ສິດ ແລະໜ້າທີ່ຂອງກະຊວງ ແລະອົງການທຽບເທົ່າກະຊວງ**

ກະຊວງ ແລະອົງການທຽບເທົ່າກະຊວງມີສິດ ແລະໜ້າທີ່ດັ່ງນີ້ :

1. ຄົ້ນຄວ້າຮ່າງນະໂຍບາຍ ແລະແຜນຍຸດທະສາດຂອງຂະແໜງການຕົນ ເພື່ອສະເໜີຕໍ່ລັດຖະບານ;
2. ຄົ້ນຄ້ວາຫັນເອົານະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານມາເປັນ ແຜນການ, ແຜນງານ ແລະໂຄງການລະອຽດຂອງຂະແໜງການຕົນ ພ້ອມທັງ ຮັບຜິດຊອບໃນການຈັດຕັ້ງປະຕິບັດ;
3. ສະເໜີປັບປຸງ ຫລືສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ຕໍ່ລັດຖະບານ; ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການ ເພື່ອຄຸ້ມຄອງມະຫາພາກໃນຂະແໜງການຂອງຕົນ;
4. ຊີ້ນຳ ແລະຄຸ້ມຄອງຕາມສາຍຕັ້ງໃນການຈັດຕັ້ງປະຕິບັດວຽກງານ ແລະບຸກ ຄະລາກອນຂອງຂະແໜງການຕົນ ໂດຍປະສານສົມທົບກັບອົງການປົກຄອງ ທ້ອງຖິ່ນ;
5. ສ້າງບຸກຄະລາກອນໃນຂະແໜງການຂອງຕົນ;
6. ພົວພັນວຽກງານກັບຕ່າງປະເທດ ຕາມການມອບໝາຍຂອງລັດຖະບານ;
7. ກວດກາ ແລະສະຫລຸບສັງລວມສະພາບການຈັດຕັ້ງປະຕິບັດວຽກງານຂະແໜງ ການຂອງຕົນ ແລ້ວລາຍງານຕໍ່ລັດຖະບານ ແລະນາຍົກລັດຖະມົນຕີ;
8. ປະຕິບັດສິດ ແລະໜ້າທີ່ອື່ນໆ ທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະລະບຽບກົດໝາຍ.

**ມາດຕາ 27 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີວ່າການກະຊວງ ແລະຫົວໜ້າອົງການທຽບເທົ່າກະຊວງ**

ລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ ແມ່ນສະມາຊິກ ລັດຖະບານ, ເປັນຫົວໜ້າຂະແໜງການ, ເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກໃນຂະແໜງການຂອງຕົນ.

**ມາດຕາ 28 ( ໃໝ່ ). ສິດ ແລະໜ້າທີ່ຂອງລັດຖະມົນຕີວ່າການກະຊວງ ແລະຫົວໜ້າອົງການທຽບເທົ່າກະຊວງ**

ລັດຖະມົນຕີວ່າການກະຊວງ ແລະຫົວໜ້າອົງການທຽບເທົ່າກະຊວງມີສິດ ແລະ ໜ້າທີ່ດັ່ງນີ້:

1. ນຳເອົາມະຕິຂອງກອງປະຊຸມລັດຖະບານ ໄປຜັນຂະຫຍາຍ ແລະຈັດຕັ້ງປະຕິບັດໃນ ຂະແໜງການຂອງຕົນ;
2. ຊີ້ນຳ, ຄຸ້ມຄອງ ແລະກວດກາການປະຕິບັດວຽກງານຂອງຂະແໜງການຕົນ;
3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການແນໃສ່ເພີ່ມທະວີປະສິດທິພາບ ໃນການຈັດຕັ້ງ, ການເຄື່ອນໄຫວຂອງການຄຸ້ມຄອງຕາມຂະແໜງການ;
4. ງົດການປະຕິບັດ, ລົບລ້າງ ຫລືຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການຂອງອົງການຈັດຕັ້ງຂັ້ນລຸ່ມທີ່ຂຶ້ນກັບຂະແໜງການຂອງຕົນ ແລະມີສິດສະເໜີ ດັດແປງ, ງົດການປະຕິບັດ, ລົບລ້າງ ຫລືຍົກເລີກນິຕິກຳຂອງຂະແໜງການ ອື່ນ ຫລືຂອງອົງການປົກຄອງທ້ອງຖິ່ນທີ່ຂັດກັບລະບຽບຫລັກການຂອງຂະແໜງການ ຕົນ ຫລືຂັດກັບລະບຽບກົດໝາຍ;
5. ວາງມາດຕະການອັນຈຳເປັນ ເພື່ອປະຕິບັດແຜນການປະຈຳປີ;
6. ສະເໜີປັບປຸງ ຫລືສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ ແລະ ຮ່າງ ດຳລັດກ່ຽວກັບຂະແໜງການຂອງຕົນຕໍ່ລັດຖະບານ;
7. ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ; ຫົວໜ້າ ພະແນກ ແລະຮອງຫົວໜ້າພະແນກ, ຫົວໜ້າ ແລະຮອງຫົວໜ້າຫົວໜ່ວຍວິຊາການ.
8. ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງຫົວໜ້າ ແລະຮອງຫົວໜ້າພະແນກຂັ້ນແຂວງ, ຫົວໜ້າຫ້ອງການຂັ້ນເມືອງຂອງຂະແໜງການຕົນ ໂດຍມີການສົມທົບກັບອົງການປົກຄອງທ້ອງຖິ່ນ;
9. ມອບວຽກງານໃດໜຶ່ງ ໃຫ້ລັດຖະມົນຕີຊ່ວຍວ່າການກະຊວງ, ຮອງຫົວໜ້າອົງການ ທຽບເທົ່າກະຊວງຮັບຜິດຊອບ; ມອບໃຫ້ລັດຖະມົນຕີຊ່ວຍວ່າການກະຊວງ, ຮອງ ຫົວໜ້າອົງການທຽບເທົ່າກະຊວງທ່ານໃດທ່ານໜຶ່ງວ່າການແທນ ໃນເວລາຕິດຂັດ;
10. ພົວພັນຮ່ວມມື, ເຊັນສັນຍາ ແລະອະນຸສັນຍາກັບຕ່າງປະເທດ ຕາມການມອບ ໝາຍຂອງລັດຖະບານ;
11. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນ ທາງດ້ານສຸຂະພາບ ຫລືດ້ວຍເຫດຜົນອື່ນໆ;
12. ປະຕິບັດສິດ ແລະໜ້າທີ່ອື່ນໆຕາມການມອບໝາຍຂອງລັດຖະບານ ຫລືຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະລະບຽບກົດໝາຍ.

**ມາດຕາ 29 ( ໃໝ່ ). ພາລະບົດບາດຂອງລັດຖະມົນຕີຊ່ວຍວ່າການກະຊວງ ແລະຮອງຫົວໜ້າອົງການທຽບເທົ່າກະຊວງ**

ລັດຖະມົນຕີຊ່ວຍວ່າການກະຊວງ ແລະຮອງຫົວໜ້າອົງການທຽບເທົ່າກະຊວງມີພາ ລະບົດບາດເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະ ຊວງໃນການນຳພາ, ອຳນວຍຄວບຄຸມວຽກງານລວມຂອງກະຊວງ, ອົງການທຽບເທົ່າກະຊວງ; ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີວ່າການກະຊວງ, ຫົວ ໜ້າ ອົງການທຽບເທົ່າກະຊວງ.

ອາຍຸການຂອງລັດຖະມົນຕີຊ່ວຍວ່າການກະຊວງ ແລະຮອງຫົວໜ້າອົງການທຽບເທົ່າກະຊວງ ເທົ່າກັບອາຍຸການຂອງລັດຖະບານ.

ລັດຖະມົນຕີຊ່ວຍວ່າການກະຊວງ ແລະ ຮອງຫົວໜ້າອົງການທຽບເທົ່າກະຊວງ ມີສິດລາອອກ ຈາກຕໍາແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນເຫດຜົນທາງ ດ້ານສຸຂະພາບ ຫລື ດ້ວຍເຫດຜົນອື່ນໆ.

## ໝວດທີ VII ລະບອບວິທີເຮັດວຽກຂອງລັດຖະບານ

### ມາດຕາ 30 ( ໃໝ່ ). ວິທີເຮັດວຽກຂອງລັດຖະບານ

ລັດຖະບານເຮັດວຽກຕາມຫລັກການລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ. ລັດຖະບານຖືເອົາ ກອງປະຊຸມເປັນຮູບການຕົ້ນຕໍໃນການເຄື່ອນໄຫວວຽກງານຂອງຕົນ.

### ມາດຕາ 31. ການເຄື່ອນໄຫວວຽກງານຂອງສະມາຊິກລັດຖະບານ

ໃນການເຄື່ອນໄຫວວຽກງານຂອງຕົນ ສະມາຊິກລັດຖະບານຕ້ອງເຄົາລົບພາລະ ບົດບາດ, ໜ້າທີ່ຂອງກັນ ແລະກັນ, ພ້ອມທັງປະສານສົມທົບກັນ.

ໃນກໍລະນີທີ່ມີບັນຫາບໍ່ເປັນເອກະພາບລະຫວ່າງສະມາຊິກດ້ວຍກັນ ໃຫ້ນໍາສະເໜີ ຕໍ່ນາຍົກ ລັດຖະມົນຕີ ເພື່ອພິຈາລະນາແກ້ໄຂ.

ໃນການເຄື່ອນໄຫວວຽກງານຕ່າງປະເທດສະມາຊິກລັດຖະບານ ຕ້ອງຂໍຄວາມເຫັນ ຈາກນາຍົກລັດຖະມົນຕີ.

### ມາດຕາ 32 ( ໃໝ່ ). ການພົວພັນກັບສະພາແຫ່ງຊາດ

ລັດຖະບານ ມີພັນທະລາຍງານການເຄື່ອນໄຫວປະຈໍາປີຂອງຕົນ ຕໍ່ສະພາແຫ່ງຊາດ, ສະເໜີ ຜ່ານແຜນຍຸດທະສາດແຫ່ງການພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ, ການດັດ ແກ້ແຜນງົບປະມານແຫ່ງລັດ ເພື່ອໃຫ້ສະພາແຫ່ງຊາດພິຈາລະນາ ແລະ ຮັບຮອງເອົາ, ອະທິບາຍ ແກ້ຂໍ້ຂ້ອງໃຈ, ຕອບການຊັກຖາມຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ຂອງ ລັດຖະບານ ຫລືຂອງສະມາຊິກລັດຖະບານທ່ານໃດທ່ານ ໜຶ່ງ.

ໃນເວລາສະພາແຫ່ງຊາດບໍ່ເປີດກອງປະຊຸມ ລັດຖະບານມີພັນທະລາຍງານການເຄື່ອນໄຫວ ວຽກງານຂອງຕົນ ຕໍ່ຄະນະປະຈໍາສະພາແຫ່ງຊາດ ແລະສະໜອງຂໍ້ມູນຕ່າງໆ ຕາມຄໍາສະເໜີຂອງ ຄະນະປະຈໍາສະພາແຫ່ງຊາດ.

ໃນການພົວພັນວຽກງານກັບຕ່າງປະເທດ ຫລືວຽກງານຢູ່ພາຍໃນປະເທດທີ່ສໍາຄັນນັ້ນ ລັດ ຖະບານຈະຕ້ອງຂໍຄວາມເຫັນດີຈາກສະພາແຫ່ງຊາດເສຍກ່ອນ. ໃນການພົວພັນກັບຕ່າງປະເທດ ຖ້າ

ຫາກໄດ້ມີການເຊັນສົນທິສັນຍາ ຫລືສັນຍາທີ່ຕ້ອງໃຫ້ສັດຕະຍາບັນ ຕາມກົດໝາຍນັ້ນ ລັດຖະບານຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງ.

**ມາດຕາ 33 ( ໃໝ່ ). ການພົວພັນກັບປະທານປະເທດ**

ລັດຖະບານ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ປະທານປະເທດ. ກອງປະຊຸມພິເສດຂອງລັດຖະບານ ແມ່ນປະທານປະເທດເປັນຜູ້ຮຽກໂຮມ ແລະເປັນປະທານ.

**ມາດຕາ 34 ( ໃໝ່ ). ການພົວພັນກັບສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ**

ລັດຖະບານປະສານສົມທົບກັບສານປະຊາຊົນສູງສຸດ ແລະອົງການໄອຍະການ ປະຊາຊົນ ສູງສຸດໃນການຕິດຕາມກວດກາການປະຕິບັດກົດໝາຍ ແລະສະກັດກັ້ນສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ.

ໃນກໍລະນີທີ່ຈຳເປັນ ລັດຖະບານອາດຈະເຊີນປະທານສານປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນສູງສຸດ ເຂົ້າຮ່ວມກອງປະຊຸມລັດຖະບານກໍໄດ້.

**ມາດຕາ 35 ( ໃໝ່ ). ການພົວພັນກັບແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມ**

ເພື່ອຮັບປະກັນ ໃຫ້ການເຄື່ອນໄຫວວຽກງານມີປະສິດທິຜົນ ລັດຖະບານປະສານສົມທົບກັບແນວລາວສ້າງຊາດ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນກຳ ມະບານລາວ, ສະຫະພັນແມ່ຍິງລາວ ແລະອົງການຈັດຕັ້ງສັງຄົມ ເພື່ອປຶກສາຫາລື, ແລກປ່ຽນຄວາມຄິດເຫັນ, ປຸກລະດົມຊຸກຍູ້ໃຫ້ອົງການຈັດຕັ້ງດັ່ງກ່າວເຂົ້າຮ່ວມໃນການຄຸ້ມຄອງ ລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ແຈ້ງທິດທາງວຽກງານ, ມະຕິກອງປະຊຸມຂອງລັດຖະບານ, ສະພາບການຕ່າງໆທີ່ສຳຄັນ, ຕອບຂໍ້ຂ້ອງໃຈ ແລະສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມໄດ້ເຄື່ອນໄຫວຕາມພາ ລະບົດບາດຂອງຕົນ.

ໃນກໍລະນີທີ່ຈຳເປັນກໍອາດຈະເຊີນຜູ້ຕາງໜ້າ ຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມເຂົ້າຮ່ວມກອງປະຊຸມຂອງລັດຖະບານກໍໄດ້.

**ມາດຕາ 36 ( ໃໝ່ ). ການພິຈາລະນາແກ້ໄຂຄຳຮ້ອງທຸກ ຫລືຄຳສະເໜີຂອງປະຊາຊົນ**

ໃນການເຄື່ອນໄຫວປະຕິບັດວຽກງານຂອງຕົນ ລັດຖະບານ ແລະສະມາຊິກລັດຖະ ບານຕ້ອງຮັບຟັງຄວາມຄິດຄວາມເຫັນຂອງປະຊາຊົນ.

ລັດຖະບານພິຈາລະນາແກ້ໄຂຄຳຮ້ອງທຸກ, ຄຳສະເໜີຂອງປະຊາຊົນກ່ຽວກັບການກະທຳທີ່ບໍ່ຖືກຕ້ອງຂອງພະນັກງານ, ລັດຖະກອນ ແລະອົງການບໍລິຫານລັດຂັ້ນຕ່າງໆ ບົນພື້ນຖານລະບຽບກົດໝາຍ.

## ໝວດທີ VIII ບົດບັນຍັດສຸດທ້າຍ

**ມາດຕາ 37. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 38( ໃໝ່ ). ຜົນສັກສິດ**

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 01/ 95, ລົງວັນທີ 8 ມີນາ 1995.

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງສາທາລະນະ ລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ